**ບົດກ່າວຕອນຮັບ**
**ໂດຍ ທ່ານ ດຣ. ສຸພັນ ແກ້ວມີໄຊ, ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ**
**ຕໍ່ກອງປະຊຸມໂຕະມົນ ປະຈຳປີ 2016**
**ວັນທີ 25 ພະຈິກ 2016, ທີ່ ແຂວງວຽງຈັນ**
**------------**

ຮຽນ: - ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນທີ່ນັບຖື,
- ທ່ານ ວິດົງ ໄຊຍະສອນ, ເຈົ້າແຂວງ ແຂວງວຽງຈັນທີ່ນັບຖື,
- ທ່ານ ນາງ ຄາຣີນາ ອິມໂມເນັນ, ຜູ້ປະສານງານເຄືອຄາຍສະຫະປະຊາຊາດ ທັງເປັນຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ ທີ່ນັບຖື,
- ບັນດາທ່ານ ຮອງລັດຖະມົນຕີ, ຜູ້ຕາງໜ້າຈາກບັນດາກະຊວງຂະແໜງການສູນກາງ ແລະ ທ້ອງຖິ່ນ,
- ບັນດາທ່ານ ເອກອັກຄະລັດຖະທູດ, ທູຕານຸທູດ, ຜູ້ຕ່າງຫນ້າ ຈາກອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ,
- ບັນດາແຂກທີ່ມີກຽດ ທ່ານຍິງ ແລະ ທ່ານຊາຍ ທີ່ນັບຖື ແລະ ຮັກແພງ,

ຂ້າພະເຈົ້າ ມີຄວາມຮູ້ສຶກປິຕິຊົມຊື່ນ ແລະ ເປັນກຽດຢ່າງຍິ່ງ ທີ່ ພະນະທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ໃຫ້ກຽດເຂົ້າຮ່ວມ ແລະ ກ່າວເປີດກອງປະຊຸມໂຕະມົນປະຈຳປີ 2016 ໃນມື້ນີ້. ການເຂົ້າຮ່ວມຂອງພະນະທ່ານ ເປັນການປຸກລະດົມກຳລັງໃຈ ແລະ ເປັນການປະກອບສ່ວນອັນສຳຄັນໃນການຊຸກຍູ້ວຽກງານຂະບວນການໂຕະມົນ ໃຫ້ບັນລຸໄດ້ຈຸດປະສົງ ແລະ ເປົ້າໝາຍທີ່ວາງໄວ້ ຢ່າງມີປະສິດທິຜົນ ແລະ ກ້າວໄປຢ່າງບໍ່ຢຸດຢັ້ງ. ພ້ອມດຽວກັນນີ້, ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈມາຍັງ ທ່ານ ວິດົງ ໄຊຍະສອນ, ເຈົ້າແຂວງແຂວງວຽງຈັນ ທີ່ໄດ້ໃຫ້ກຽດກ່າວຕ້ອນຮັບຜູ້ແທນກອງປະຊຸມໃນຄັ້ງນີ້, ພ້ອມນີ້ ກໍ່ຂໍຂອບໃຈ ທ່ານ ນາງ ຄາຣີນາ ອິມໂມເນັນ, ຜູ້ປະສານງານເຄືອຄາຍອົງການສະຫະປະຊາຊາດ ທັງເປັນຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ ທີ່ໄດ້ໃຫ້ກຽດ ເປັນປະທານຮ່ວມໃນກອງປະຊຸມໃນຄັ້ງນີ້ນຳດ້ວຍ.

ກອງປະຊຸມໂຕະມົນປະຈຳປີ 2016 ໃນຄັ້ງນີ້ ຖືເປັນອີກເຫດການໜຶ່ງທີ່ສຳຄັນ ໃນຂະບວນການພັດທະນາເສດຖະກິດ-ສັງຄົມ ຢູ່ໃນ ສປປ ລາວ ເຮົາ, ເພາະກອງປະຊຸມດັ່ງກ່າວແມ່ນເວທີ ໃນການປຸກລະດົມຂົນຂວາຍທຶນຮອນ ກໍ່ຄືການຜັນຂະຫຍາຍການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງການຊ່ວຍເຫຼືອທາງການເພື່ອການພັດທະນາ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ. ການດຳເນີນວຽກງານຂະບວນການໂຕະມົນໃນຄັ້ງນີ້ ກໍ່ຄືທຸກໆປີທີ່ຜ່ານມາ, ລັດຖະບານແຫ່ງ ສປປ ລາວ ໄດ້ໃຫ້ຄວາມສຳຄັນ ແລະ ໄດ້ຕັ້ງໜ້າຜັນຂະຫຍາຍວຽກງານຂະບວນການໂຕະມົນ ໃຫ້ເປັນຮູບປະທຳ ທັງທາງດ້ານເນື້ອໃນ ກໍ່ຄືການຈັດຕັ້ງປະຕິບັດ ແລະ ຊຸກຍູ້ໃຫ້ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງກວ້າງຂວາງ, ທັງນີ້ກໍ່ເພື່ອຍົກສູງພາລະບົດບາດ,

ຄວາມຮັບຜິດຊອບ, ການມີສ່ວນຮ່ວມ ແລະ ຄວາມເປັນເຈົ້າການ ຂອງຂະແໜງການຕ່າງໆຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຢູ່ ໃນ ສປປ ລາວ.

ເພື່ອໃຫ້ບັນດາຂະແໜງການຕ່າງໆຢູ່ທ້ອງຖິ່ນ ໄດ້ເປັນເຈົ້າການຫຼາຍຂຶ້ນ ໃນການຈັດຕັ້ງປະຕິບັດການຊ່ວຍເຫຼືອທາງການເພື່ອການພັດທະນາ, ດັ່ງນັ້ນ ກອງປະຊຸມໂຕະມົນປະຈຳປີນີ້ ຈຶ່ງໄດ້ຈັດຂຶ້ນທີ່ແຂວງວຽງຈັນ ແລະ ດຳເນີນໄປພາຍໃຕ້ຄຳຂວັນທີ່ວ່າ **"ເລັ່ງລັດຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ເພື່ອນຳພາປະເທດຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ"**

**ບັນດາທ່ານທີ່ນັບຖື ແລະ ຮັກແພງທັງຫຼາຍ**,

ພວກເຮົາ ຈະໃຊ້ເວທີອັນສຳຄັນນີ້ ເພື່ອໃຫ້ບັນດາຜູ້ແທນຈາກລັດຖະບານລາວ ແລະ ບັນດາຄູ່ຮ່ວມພັດທະນາ ໄດ້ສົນທະນາ ແລະ ປະກອບຄຳຄິດຄຳເຫັນ ກົງໄປກົງມາ ແລະ ຢ່າງສ້າງສັນ ຕໍ່ກັບ ວຽກງານການພັດທະນາຢູ່ ສປປ ລາວ ໂດຍສະເພາະແມ່ນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ການຈັດຕັ້ງບັນດາເປົ້າໝາຍພັດທະນາແບບຍືນຍົງ SDGs, ຍຸດທະສາດວ່າດ້ວຍການເຕີບໂຕສີຂຽວ ແລະ ການກະກຽມ ແລະ ຮັບຮອງແຜນດຳເນີນງານຖະແຫຼງການວຽງຈັນ.

ຄືດັ່ງບັນດາທ່ານໄດ້ຮັບຮູ້ນຳກັນແລ້ວວ່າ ໃນກອງປະຊຸມສະພາສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ VIII ທີ່ຫາກໍ່ປິດລົງດ້ວຍຜົນສຳເລັດອັນຈົບງາມໃນອາທິດທີ່ຜ່ານມານີ້, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ (2016-2020) ຄັ້ງທີ VIII ກໍ່ໄດ້ມີການດັດແກ້ຕົວເລກມະຫາພາກສຳລັບແຜນການ 4 ປີ (2017-2020) ໂດຍສະເພາະແມ່ນການຄາດຄະເນ ຕົວເລກການຂະຫຍາຍຕົວຂອງລວມຍອດຜະລິດຕະພັນພາຍໃນ (GDP) ແມ່ນຢູ່ໃນລະດັບສະເລັ່ຍປະມານ 7,2% ແລະ ຕົວເລກການລົງທຶນລວມ, ຕົວເລກງົບປະມານ-ເງິນຕາ ແລະ ຕົວເລກການພັດທະນາທາງດ້ານສັງຄົມ ເຊິ່ງເປັນຕົວເລກທີ່ສຳຄັນ ແລະ ເປັນພື້ນຖານໃນການກຳນົດທິດທາງ ແລະ ຄາດໝາຍສູ້ຊົນ ໃນການພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນ.

ນອກຈາກນັ້ນ, ສຳລັບສົກປີ 2015-2016 ນີ້, ຕົວເລກມູນຄ່າ ຂອງການຊ່ວຍເຫຼືອທາງການເພື່ອການພັດທະນາ ບັນລຸໄດ້ເຖິງ 789,36 ລ້ານໂດລາສະຫະລັດ, ເຊິ່ງໃນນີ້ ມູນຄ່າການຊ່ວຍເຫລືອລ້າແມ່ນ 240,07 ລ້ານໂດລາສະຫະລັດ ແລະ ກູ້ຢືມ 549,29 ລ້ານໂດລາສະຫະລັດ. ທັງໝົດນີ້ໄດ້ສະແດງໃຫ້ເຫັນວ່າ ບັນດາຄູ່ຮ່ວມພັດທະນາ ຍາມໃດກໍ່ໃຫ້ຄວາມສຳຄັນ ແລະ ເປັນຫ່ວງເປັນໃຍ ແລະ ພວກເຮົາມີຄວາມຕ້ອງການການຊ່ວຍເຫຼືອດັ່ງກ່າວ ເພື່ອປະກອບສ່ວນ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຢູ່ໃນ ສປປ ລາວ. ນະໂອກາດນີ້, ໂດຍຕາງໜ້າໃຫ້ ລັດຖະບານ ແຫ່ງ ສປປ ລາວ, ຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນ ແລະ ຂໍຂອບໃຈ ມາຍັງບັນດາຄູ່ຮ່ວມພັດທະນາຕ່າງໆທີ່ໃຫ້ການຊ່ວຍເຫຼືອດັ່ງກ່າວ. ສ່ວນລາຍລະອຽດ ທ່ານ

ດຣ. ກິແກ້ວ ຈັນທະບູຣີ, ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ຈະລາຍງານຜົນຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 10 ເດືອນ, ຄາດຄະເນໝົດ ສົກປີ 2015-2016 ແລະ ແຜນການປະຈໍາປີ 2017 ແລະ ຄາດໝາຍ 4 ປີ ທີ່ຍັງເຫລືອ.

ນອກຈາກນັ້ນແລ້ວ, ບັນດາທ່ານຍັງຈະໄດ້ຮັບຟັງຜົນຂອງການສົນທະນາປຶກສາຫາລື 4 ຫົວຂໍ້ສໍາຄັນຕໍ່ວຽກງານຂອງການພັດທະນາໃນຕໍ່ໜ້າ ທີ່ໄດ້ຈັດຂຶ້ນວານນີ້ ເຊິ່ງຫົວຂໍ້ດັ່ງກ່າວແມ່ນໄດ້ມີການສົນທະນາແລກປ່ຽນຢ່າງເລິກເຊິ່ງ ແລະ ໄດ້ຄົ້ນຄວ້າ ເຖິງວິທີການຈັດຕັ້ງປະຕິບັດ ເພື່ອໃຫ້ເກີດປະໂຫຍດສູງສຸດ ເປັນຕົ້ນແມ່ນ: ① ການເຊື່ອມສານເອົາບັນດາເປົ້າໝາຍການພັດທະນາແບບຍືນຍົງ ເຂົ້າໃນວາລະການພັດທະນາແຫ່ງຊາດ; ② ການລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດແຜນງານຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ; ③ ການຈັດຕັ້ງປະຕິບັດບັນດາຍຸດທະສາດ ວ່າດ້ວຍການເຕີບໂຕສີຂຽວ, ການປ່ຽນແປງຂອງດິນຟ້າອາກາດ ແລະ ການກຽມຄວາມພ້ອມ ເພື່ອຮັບມືກັບໄພພິບັດທາງທໍາມະຊາດຕ່າງໆ; ແລະ ④ ການກະກຽມ ແລະ ຮັບຮອງແຜນດໍາເນີນງານຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມງານ ເພື່ອການພັດທະນາທີ່ມີປະສິດທິຜົນ. ດັ່ງນັ້ນແລ້ວ, ເພື່ອເຮັດໃຫ້ຜົນຂອງການປຶກສາຫາລືໃນ 4 ຫົວຂໍ້ດັ່ງກ່າວມີ ຈຸດສຸມ ແລະ ມີຜົນໄດ້ຮັບຕາມເປົ້າໝາຍຂອງກອງປະຊຸມໃນມື້ນີ້, ຂ້າພະເຈົ້າຂໍເນັ້ນໜັກບາງຈຸດເພີ່ມເຕີມ ກ່ຽວກັບບັນຫາດັ່ງກ່າວຄືດັ່ງຕໍ່ໄປນີ້:

1. ພວກເຮົາຕ້ອງຮັບປະກັນວ່າ ການເຊື່ອມສານເອົາບັນດາເປົ້າໝາຍການພັດທະນາແບບຍືນຍົງ ເຂົ້າໃນວາລະການພັດທະນາແຫ່ງຊາດ ກໍ່ຄືຂັ້ນທ້ອງຖິ່ນ ໃຫ້ສາມາດສ່ອງແສງໃຫ້ເຫັນໄດ້ ເຖິງຄວາມຕ້ອງການ ການນໍາໃຊ້ທຶນຮອນເຂົ້າໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ແລະ ການຊຸກຍູ້ໃຫ້ທຸກພາກສ່ວນ ລວມທັງພາກທຸລະກິດມີສ່ວນຮ່ວມໃນການຈັດຕັ້ງປະຕິບັດບັນດາເປົ້າໝາຍດັ່ງກ່າວໃຫ້ຫລາຍຂຶ້ນ. ຄຽງຄູ່ກັນນັ້ນ ວຽກງານການຕິດຕາມ ແລະ ເກັບກໍາຂໍ້ມູນທາງດ້ານສະຖິຕິກ່ຽວກັບການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ກໍ່ມີຄວາມສໍາຄັນ ເພື່ອສາມາດວັດແທກຄວາມສໍາເລັດໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ມີປະສິດທິຜົນ;

2. ຕໍ່ກັບແຜນງານຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ທີ່ລັດຖະບານໄດ້ຮັບຮອງ ເປັນແຜນງານຕະລຸມບອນໃນການຈັດຕັ້ງປະຕິບັດນັ້ນ, ການປະສານງານກໍ່ຄວນໃຫ້ມີຄວາມໜັກແໜ້ນ ແລະ ກົມກຽວກັນຫຼາຍຂຶ້ນ, ຄວນໄດ້ຮັບການເອົາໃຈໃສ່ ແລະມີສ່ວນຮ່ວມໃນທຸກຂັ້ນໃນຂະບວນການວາງແຜນ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາຮ່ວມກັນ, ເຖິງວ່າວຽກງານແຜນງານຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ມີຄວາມຕ້ອງການທາງດ້ານທຶນຮອນສູງກໍ່ຕາມ, ແຕ່ພວກເຮົາທຸກຄົນໃນທີ່ນີ້ຕ້ອງໄດ້ຕັ້ງໜ້າຊ່ວຍເຫລືອເຊິ່ງກັນແລະກັນ ເພື່ອໃຫ້ບັນລຸເປົ້າໝາຍດັ່ງກ່າວນັ້ນໃຫ້ໄດ້;

3. ການຈັດຕັ້ງປະຕິບັດບັນດາຍຸດທະສາດ ວ່າດ້ວຍການເຕີບໂຕສີຂຽວ, ການປ່ຽນແປງຂອງດິນຟ້າອາກາດ ແລະ ການກຽມຄວາມພ້ອມເພື່ອຮັບມືກັບໄພພິບັດທາງທໍາມະຊາດຕ່າງໆ ແມ່ນຈະຕ້ອງ

ໄດ້ຮັບການຜັນຂະຫຍາຍຢ່າງເປັນຮູບປະທຳ ເພາະລັດຖະບານໄດ້ໃຫ້ສັດຕະຍາບັນແກ່ອົງການສະຫະປະຊາຊາດ ກ່ຽວກັບການປ່ຽນແປງສະພາບດິນຟ້າອາກາດ ເຊິ່ງມັນສະແດງອອກເຖິງການເອົາໃຈໃສ່ ແລະ ມີສ່ວນຮ່ວມໃຫ້ຄວາມສຳຄັນສຳລັບວຽກງານດັ່ງກ່າວ ດັ່ງນັ້ນຈຶ່ງຮຽກຮ້ອງໃຫ້ຫລາຍພາກສ່ວນມີສ່ວນຮ່ວມຫລາຍຂຶ້ນ;

4. ເພື່ອເຮັດໃຫ້ການຮ່ວມມືມີປະສິດທິຜົນ ພວກເຮົາຈະປຶກສາຫາລືກ່ຽວກັບແຜນດຳເນີນງານຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ ແລະ ຮັບຮອງເອົາແຜນດຳເນີນງານດັ່ງກ່າວ ໂດຍໃຫ້ທຸກພາກສ່ວນ ລວມທັງ ພາກທຸລະກິດ ແລະ ອົງການຈັດຕັ້ງທາງສັງຄົມມີສ່ວນຮ່ວມຫຼາຍຂຶ້ນໃນການພັດທະນາ, ພ້ອມດຽວກັນນັ້ນ ໃຫ້ຂະແໜງການທີ່ກ່ຽວຂ້ອງເອົາໃຈໃສ່ໃນການປັບປຸງດຳລັດ 75 ວ່າດ້ວຍການຈັດຕັ້ງປະຕິບັດການຊ່ວຍເຫລືອທາງການເພື່ອການ ໃຫ້ສອດຄ່ອງກັບແຜນດຳເນີນງານຖະແຫລງການວຽງຈັນ.

**ບັນດາທ່ານທີ່ນັບຖື ແລະ ຮັກແພງທັງຫຼາຍ**,

ເພື່ອເຮັດໃຫ້ແຜນງານ ຂ້າງເທິງນີ້ ລວມທັງບັນດາເປົ້າໝາຍ SDGs ຕ່າງໆ ໄດ້ຮັບການຈັດຕັ້ງປະຕິບັດໄປຢ່າງຖືກຕ້ອງ ແລະ ສອດຄ່ອງ ຕາມນະໂຍບາຍການພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ ກໍ່ຄື ວາລະຂອງການພັດທະນາ ຂອງສາກົນໃນ SDGs ໂດຍສະເພາະ ເປົ້າຫມາຍ ທີ 17 ທີ່ວ່າການສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງປະຕິບັດ ແລະ ເພີ່ມທະວີການເປັນຄູ່ຮ່ວມສາກົນ ເພື່ອພັດທະນາແບບຍືນຍົງ", ມັນຮຽກຮ້ອງໃຫ້ທຸກພາກສ່ວນທຸກຂະແໜງການທີ່ກ່ຽວຂ້ອງຢູ່ ຂັ້ນສູນກາງ ແລະ ທ້ອງຖິ່ນລວມທັງບັນດາຄູ່ຮ່ວມພັດທະນາ ຕ້ອງໄດ້ນຳເອົາແຜນປະຕິບັດງານຂອງເປົ້າຫມາຍຕ່າງໆ ເຂົ້າໃນແຜນງົບປະມານປະຈຳປີ ຂອງຕົນ ເພື່ອສາມາດຈັດຕັ້ງປະຕິບັດໄດ້ຢ່າງປົກກະຕິຕໍ່ເນື່ອງ ແລະ ມີຜົນສຳເລັດ.

ອີກເທື່ອໜຶ່ງ ຂ້າພະເຈົ້າໃນນາມປະທານຮ່ວມກອງປະຊຸມໃນມື້ນີ້ ຈຶ່ງສະເໜີມາຍັງທຸກທ່ານ ບໍ່ວ່າຈະເປັນຜູ້ຕາງໜ້າຈາກຂັ້ນສູນກາງ ກໍ່ຄື ຈາກທ້ອງຖິ່ນ ແລະ ບັນດາຄູ່ຮ່ວມພັດທະນາ, ຜູ້ຕາງໜ້າຈາກອົງການຈັດຕັ້ງສາກົນຕ່າງໆ ຈົ່ງຊ່ວຍປະກອບຄຳຄິດເຫັນຢ່າງສ້າງສັນ, ມີການແລກປ່ຽນບົດຮຽນ ແລະ ຂໍ້ສະເໜີຕ່າງໆຢ່າງກົງໄປກົງມາ ແລະ ມີຈຸດສຸມ ເພື່ອເຮັດໃຫ້ກອງປະຊຸມໃນຄັ້ງນີ້ ສາມາດບັນລຸໄດ້ເປົ້າໝາຍທີ່ໄດ້ກຳນົດໄວ້. ພວກຂ້າພະເຈົ້າ ຫວັງຢ່າງຍິ່ງວ່າ ບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາຕ່າງໆ ຈະສືບຕໍ່ໃຫ້ການຮ່ວມມືຊ່ວຍເຫຼືອ ໃນການຈັດຕັ້ງປະຕິບັດແຜນງານ/ໂຄງການ ແລະ ແຜນຍຸດທະສາດຕ່າງໆ ເພື່ອໃຫ້ບັນລຸເປົ້າໝາຍການພັດທະນາແບບຍືນຍົງ ທີ່ ລັດຖະບານໄດ້ວາງໄວ້.

ທ້າຍສຸດນີ້ ຂ້າພະເຈົ້າຂໍອວຍພອນໃຫ້ບັນດາທ່ານ ຈົ່ງມີສຸຂະພາບແຂງແຮງ, ມີພາລະນາໄມທີ່ສົມບູນ ແລະ ປະສົບຜົນສຳເລັດໃນການປະຕິບັດພາລະກິດໜ້າທີ່ວຽກງານຂອງຕົນ ແລະ ຂໍອວຍ ພອນໃຫ້ກອງປະຊຸມດຳເນີນໄປຢ່າງມີຜົນສຳເລັດອັນຈົບງາມ.

# ຂໍຂອບໃຈ